ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດກອງປະຊຸມຄະນະກຳມະການເຊື່ອມໂຍງ ຂະແໜງການທະນາຄານອາຊຽນຄັ້ງທີ 11



(ເບື້ອງຊ້າຍມື ທ່ານ ນ. ຟອງຈິນດາ ແສງສຸລິວົງ, ເບື້ອງຂວາມື ທ່ານ ສຸລະວຸດ ປູກບຳລຸງ)

ໃນວັນທີ 09 ກຸມພາ 2022, ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານແຫ່ງປະເທດໄທ (ທປທ) ໄດ້ຈັດກອງປະຊຸມຄະນະກຳມະການເຮັດວຽກກ່ຽວກັບກອບການເຊື່ອມໂຍງຂອງຂະແໜງການທະນາຄານອາຊຽນ ຄັ້ງທີ 11 ຫຼື The 11th Meeting Of The Working Committee On ASEAN Banking Integration Framework (WC-ABIF)’ ຂຶ້ນ ຜ່ານລະບົບ videoconference ເຊິ່ງມີຜູ້ຕາງໜ້າຈາກບັນດາທະນາຄານກາງ ແລະ ອົງການຄຸ້ມຄອງທະນາຄານທຸລະກິດຂອງປະເທດສະມາຊິກອາຊຽນ 10 ປະເທດ, ກອງເລຂາ ASEAN ແລະ ຄູ່ຮ່ວມງານສາກົນ, ເຂົ້າຮ່ວມກອງປະຊຸມ.

ຕາງໜ້າ ທຫລ ໂດຍ ທ່ານ ນ. ຟອງຈິນດາ ແສງສຸລິວົງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຫົວໜ້າຄະນະເຂົ້າຮ່ວມກອງປະຊຸມ WC-ABIF ເປັນປະທານຮ່ວມກັບ ທ່ານ ສຸລະວຸດ ປູກບຳລຸງ ຫົວໜ້າກົມຍຸດທະສາດສະຖາບັນການເງິນ, ຫົວໜ້າຄະນະ WC-ABIF ຕາງໜ້າ ທປທ ເປັນປະທານຮ່ວມ. ກອງປະຊຸມໄດ້ມີການລາຍງານຄວາມຄືບໜ້າ ແລະ ປຶກສາຫາລືຫຼາຍບັນຫາ ໂດຍສະເພາະແມ່ນການເຫັນດີຕໍ່ກັບບຸລິມະສິດປະຈຳປີ 2022 ຂອງ WC-ABIF, ຜົນຂອງກອງປະຊຸມສຸດຍອດອາຊຽນ ຄັ້ງທີ 38 ແລະ 39 ທີ່ຜ່ານມາ ເຊິ່ງລວມມີເນື້ອໃນການນຳສະເໜີກ່ຽວກັບການລິເລີ່ມຂອງປະເທດອາຊຽນໃນການສ້າງ ASEAN Taxonomy ໃຫ້ແກ່ວຽກງານເງິນຍືນຍົງ.

ນອກນັ້ນໃນກອງປະຊຸມ, ກໍ່ມີການນຳສະເໜີ **‘ບົດຄົ້ນຄວ້າກ່ຽວກັບພື້ນຖານໂຄງລ່າງທາງການເງິນຂອງບັນດາປະເທດສະມາຊິກອາຊຽນ ຕໍ່ກັບການເຊື່ອມໂຍງຂະແໜງການທະນາຄານໃນຍຸກດິຈິຕອລ’** ໂດຍທ່ານ ປອ ຊິໂນບຸ ນາຄາກະວະ, ພ້ອມຄະນະຊ່ຽວຊານຂອງມະຫາວິທະຍາໄລຊາຕາມະ ເຊິ່ງໄດ້ຮັບການສະໜັບສະໜູນທຶນຈາກ ADB, ເຊິ່ງບົດຄົ້ນຄວ້າດັ່ງກ່າວ ໄດ້ດຳເນີນການປະເມີນກ່ຽວກັບຂະບວນການເຊື່ອມໂຍງ-ເນື້ອໃນສຳຄັນຕໍ່ການຄຸ້ມຄອງທະນາຄານລະຫວ່າງປະເທດສະມາຊິກອາຊຽນ ໃນຍຸກຂອງການເງິນດິຈິຕອລຄື: ທະນາຄານຄວນໄດ້ຮັບການກວດກາ ແລະ ຄຸ້ມຄອງ ຄືແນວໃດໃນຍຸກດິຈິຕອລ?, ໂດຍໄດ້ມີຄຳແນະນຳຕໍ່ກັບຈຸດນັ້ນວ່າ ຜູ້ຄຸ້ມຄອງຕ້ອງທົບທວນຄືນວ່າ ການຫັນເປັນດິຈິຕອລຂອງຂະແໜງການເງິນ ແມ່ນເພື່ອສົ່ງເສີມ ❶ ກິດຈະກຳການທະນາຄານແບບ

ຂ້າມແດນ ແລະ ❷ ແນວຄວາມຄິດການມີຜູ້ຄຸ້ມຄອງແບບມີຕົວຕົນຂ້າມແດນ ເຊັ່ນ: ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ທະນາຄານລູກ, ເຊິ່ງປັດໄຈດັ່ງກ່າວ ອາດຈະຍັງບໍ່ທັນຈະແຈ້ງໃນໄລຍະກາງ ແລະ ຍາວນານ. ທັງນີ້ກໍ່ເພື່ອໃຫ້ບັນດາປະເທດສະມາຊິກໄດ້ແລກປ່ຽນ ແລະ ປຶກສາຫາລືກັນ ກ່ອນທີ່ຈະດຳເນີນການຮັບຮອງໃນຕໍ່ໜ້າ.




ພ້ອມກັນນັ້ນ, ກອງປະຊຸມໄດ້ມີການລາຍງານ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນງານໃນປີ 2021 ຊຶ່ງມີຜົນສຳເລັດເປັນສ່ວນໃຫຍ່, ຄວາມຄືບໜ້າໃນການປັບປຸງລະບຽບການໃຫ້ໃກ້ຄຽງກັບຂອງບັນດາປະເທດສະມາຊິກ ຕາມຫຼັກການ Basel & IFRS ແລະ ການສ້າງສັນຍາຮ່ວມມືໃນການຄຸ້ມຄອງທະນາຄານທຸລະກິດ. ໃນນີ້, ພົ້ນເດັ່ນແມ່ນການສ້າງເຊັນບົດບັນທຶກການຮ່ວມມືສອງຝ່າຍໃນການຄຸ້ມຄອງທະນາຄານທຸລະກິດ ລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດຫວຽດນາມ.

ໃນທ້າຍກອງປະຊຸມທ່ານ ນ. ຟອງຈິນດາ ແສງສຸລິວົງ ໃນນາມປະທານຮ່ວມກອງປະຊຸມສະແດງຄວາມຂອບໃຈຕໍ່ບັນດາຄະນະເຮັດວຽກຂອງປະເທດສະມາຊິກ WC-ABIF ຂອງອາຊຽນທີ່ໃຫ້ການຊ່ວຍເຫຼືອ ແລະ ຮ່ວມມືດ້ານວິຊາການຕະຫຼອດໄລຍະເວລາ 2 ປີ (2020-2021) ທີ່ທະນາຄານ ແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທ ໄດ້ເປັນປະທານຮ່ວມໃນກອບການເຊື່ອມໂຍງຂອງຂະແໜງການທະນາຄານອາຊຽນ.



(ຄະນະຮັບຜິດຊອບຈັດກອງປະຊຸມ ແລະ ຄະນະ WC-ABIF ຂອງ ທຫລ)

ຂ່າວໂດຍ: ຄະນະ WC-ABIF ຂອງ ທຫລ